ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**********

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY
ບ້ານ ໜອງຄັນຄູ, ເມືອງ ນາຊາຍທອງ,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 030 9882809,ແຟັກ:(856-21)

ເລກທີ: 030/ລອທ

ນະຄອນຫຼວງວຽງຈັນ, 20 FEB 2026

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື,
ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫລັກຊັບລາວ ຈຳກັດ ທີ່ນັບຖື,
ທ່ານ ຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ນັບຖື,

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 01 ປະຈຳປີ 2026

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 004/ຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ ("ບໍລິສັດ" ຫຼື "ລອທ") ໄດ້ຈັດກອງປະຊຸມສະພາບໍລິຫານ ຄັ້ງທີ 01 ປະຈຳປີ 2026 ຈັດຂຶ້ນໃນວັນທີ 20 ກຸມພາ 2026 ເວລາ 14:00 ໂມງ ຢູ່ທີ່ສຳນັກງານໃຫຍ່ ບໍລິສັດ ລາວອາໂກຣ ເທັກ ມະຫາຊົນ, ຖະໜົນ 13 ເໜືອ, ບ້ານໜອງຄັນຄູ, ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ ໃຫ້ກຽດເປັນ ປະທານໂດຍ ທ່ານ ອະພິສິດ ຣຸຈິກຽດກຳຈອນ ປະທານສະພາບໍລິຫານ.

**<u>ລາຍຊື່ສະມາຊິກສະພາບໍລິຫານທີ່ເຂົ້າຮ່ວມກອງປະຊຸມ</u>**

| | | | |
|---|---|---|---|
| 1. | ທ່ານ ອະພິສິດ | ຣຸຈິກຽດກຳຈອນ | ປະທານສະພາບໍລິຫານ |
| 2. | ທ່ານ ນາງ ຄຳແພງ | ພັດທະດາວົງ | ຮອງປະທານສະພາບໍລິຫານ |
| 3. | ທ່ານ ເສດ | ພັດທະນະມາດ | ສະມາຊິກສະພາບໍລິຫານ/ຜູ້ອຳນວຍການ |
| 4. | ທ່ານ ພິງຖານ | ພິດຈຳນົງ | ສະມາຊິກສະພາບໍລິຫານ |
| 5. | ທ່ານ ນາງ ດວງສະໄໝ | ເລົ່າຝຸ່ງ | ສະມາຊິກສະພາບໍລິຫານ |

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ລອທ) ຂໍຖືເປັນກຽດ ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານ ສະໄໝສາມັນ ຄັ້ງທີ 01 ປະຈຳປີ 2026 ໂດຍມີລາຍລະອຽດດັ່ງລຸ່ມນີ້:

1. ມະຕິເຫັນດີຮັບຮອງບົດລາຍງານກອງປະຊຸມສະພາບໍລິຫານ ຄັ້ງທີ 04 ປະຈຳປີ 2025.
2. ຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2025 ແລະ ບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2025 ຈາກບໍລິສັດຜູ້ກວດສອບພາຍນອກ ເພື່ອສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາ.
3. ຮັບຮອງເອົາແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2026 ສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງເອົາ.
4. ຮັບຮອງເອົາການບໍ່ຈ່າຍເງິນປັນຜົນຈາກການດຳເນີນທຸລະກິດປະຈຳປີ 2025 ເນື່ອງຈາກບໍລິສັດຂາດທຶນຈາກການດຳເນີນທຸລະກິດ ແລະ ສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງເອົາ.
5. ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ອະນຸມັດແຕ່ງຕັ້ງ ຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປະຈຳປີ 2026.
6. ເຫັນດີມອບອຳນາດໃຫ້ ທ່ານ ເສດ ພັດທະນະມາດ ຜູ້ອຳນວຍການໃຫຍ່ບໍລິສັດ ເປັນຜູ້ມີອຳນາດໃນການກຳນົດລາຍລະອຽດ ແລະ ເງື່ອນໄຂຕ່າງໆ ກ່ຽວກັບການກະກຽມຈັດກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2025 ໄດ້ທຸກປະການລວມທັງການກະກຽມເອກະສານຕ່າງໆ ແລະ ດຳເນີນການໃຫ້ຖືກຕ້ອງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ.
7. ຮັບຮອງການກະກຽມກອງປະຊຸມຜູ້ຖືຮຸ້ນປະຈຳປີ 2025 ດັ່ງນີ້:
   - ກຳນົດເອົາວັນທີ 11 ມິນາ 2026 ເປັນວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025.
   - ກຳນົດເອົາວັນທີ 27 ເມສາ 2026, ເວລາ 15:00ນ ເປັນວັນຈັດກອງປະຊຸມຜູ້ຖືຮຸ້ນປະຈຳປີ 2025 ໂດຍກຳນົດວາລະກອງປະຊຸມຜູ້ຖືຮຸ້ນປະຈຳປີ 2025 ຄື:
     1. ພິຈາລະນາ ແລະ ຮັບຮອງເອົາບົດລາຍງານກອງປະຊຸມຜູ້ຖືຮຸ້ນປະຈຳປີ 2024.
     2. ພິຈາລະນາ ແລະ ຮັບຮອງຜົນການດຳເນີນທຸລະກິດປະຈຳປີ 2025 ແລະ ເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2025.
     3. ພິຈາລະນາ ແລະ ຮັບຮອງເອົາແຜນການດຳເນີນທຸລະກິດ ປະຈຳປີ 2026.
     4. ພິຈາລະນາ ແລະ ຮັບຮອງການບໍ່ຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ປະຈຳປີ 2025.
     5. ພິຈາລະນາ ແລະ ອະນຸມັດແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປະຈຳປີ 2026.
     6. ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານທີ່ຄົບວາລະ.
     7. ເລື່ອງອື່ນໆ (ຖ້າມີ).

ດັ່ງນັ້ນ, ຈຶ່ງແຈ້ງຍັງທ່ານເພື່ອຮັບຊາບ

ດ້ວຍຄວາມນັບຖືເປັນຢ່າງສູງ

ຜູ້ອຳນວຍການໃຫຍ່




ປອ. ເສດ ພັດທະນະມາດ